ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----===000===-----

ກະຊວງສຶກສາທິການ

ກົມອາຊີວະສຶກສາ ແລະ ການສຶກສາຊັ້ນສູງ

ໂຮງຮຽນເຕັກນິກກະສິກຳ ດົງຄຳຊ້າງ

ສະຖານທີ່ລົງຝຶກງານ

ສູນຄົ້ນຄ້ວາປ່າໄມ້ນ້ຳຊ່ວງ

# ບົດສຶກສາໂຄງການ

ວ່າດ້ວຍ : ເຕັກນິກ ໃນການປູກໄມ້ສັກ

ຂຽນໂດຍ : ນ. ສຸດຕາ ແກ້ວບຸນມີ

ນັກສຶກສາ: ລຸ້ນທີ X

ຂະແໜງ: ກະສິກຳ-ປ່າໄມ້

ຊີ້ນຳໂດຍ: ອາຈານ ພູວຽງ ລານມີໄຊ

ທ່ານ ສົມພອນ ພົງດາລັດ

ຮັບຜິດຊອບ: ອາຈານ ບຸນໂຮມ ເທບພະວົງ

ສົກສຶກສາ 1998-2001

0328
29-10-03

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----===000===-----

ກະຊວງສຶກສາທິການ
ກົມອາຊີວະສຶກສາ ແລະ ການສຶກສາຊັ້ນສູງ
ໂຮງຮຽນເຕັກນິກກະສິກຳ ດົງຄຳຊ້າງ

ສະຖານທີ່ລົງຝຶກງານ
ສູນຄົ້ນຄ້ວາປ່າໄມ້ນາຊ່ວງ

# ບົດສຶກສາໂຄງການ

| | |
|---|---|
| ວ່າດ້ວຍ : | ເຕັກນິກ ໃນການປູກໄມ້ສັກ |
| ຂຽນໂດຍ : | ນ. ສຸດຕາ ແກ້ວບຸນມີ |
| ນັກສຶກສາ: | ລຸ້ນທີ X |
| ຂະແໜງ: | ກະສິກຳ-ປ່າໄມ້ |
| ຊີ້ນຳໂດຍ: | ອາຈານ ພູວຽງ ລານມີໄຊ |
| | ທ່ານ ສົມພອນ ພົງດາລັດ |
| ຮັບຜິດຊອບ: | ອາຈານ ບຸນໂຮມ ເທບພະວົງ |

ສົກສຶກສາ 1998-2001

ສູນຄົ້ນຄວ້າປ່າໄມ້
ຫ້ອງສະໝຸດ
ເລກທະບຽນ: 0442
ລາຍໝູ່ບັນຊີ:
ວັນທີ: 26-7-07

# ບົດສັງລວມ

ໄມ້ສັກ ເປັນໄມ້ພື້ນເມືອງຂອງລາວເຮົາ ໄດ້ກະຈ່າຍຢູ່ໃນ 4 ປະເທດ ຄື: ລາວ, ໄທ, ພະມ້າ ແລະ ອິນເດຍ. ໄມ້ສັກ ມີຖິ່ນກຳເນີດຢູ່ທາງພາກເໜືອຂອງລາວ ເຊັ່ນ: ເມືອງປາກລາຍ, ແຂວງໄຊຍະບູລີ ແລະ ແຂວງບໍ່ແກ້ວ. ສາມາດນຳເອົາມາປູກຢູ່ຫຼາຍໆແຂວງຂອງລາວ.

ການທີ່ເຮົາຈະສ້າງສວນປ່າ ກ່ອນອື່ນໝົດ, ພວກເຮົາຕ້ອງມີການສັງລວມພື້ນທີ່ເພື່ອຢາກຮູ້ຈັກພື້ນທີ່ທັງໝົດ ເມື່ອເຮົາສຳຫຼວດເປັນທີ່ຮຽບຮ້ອຍແລ້ວ ເຮົາຕ້ອງຮູ້ຈັກສະຖານທີ່ດັ່ງກ່າວ ແລະ ພ້ອມດ້ວຍຮູ້ຈັກປະເພດຂອງປ່າ. ກໍ່ຕ້ອງໄດ້ຄຳນວນເຖິງການທີ່ເຮົາຈະບຸກເບີກອີກດ້ວຍ.ເມື່ອເຮົາຮູ້ເຊັ່ນນັ້ນແລ້ວ, ກໍ່ຕ້ອງໄດ້ມີການກຳນົດເວລາ ແລະ ພ້ອມດ້ວຍການວາງແຜນ.

ພື້ນທີ່ສຳລັບການປູກໄມ້, ໃນກໍລະນີທີ່ເຮົາຈະໃຊ້ກິນຈັກເຂົ້າໃນການກຽມດິນ ຕ້ອງໄຖໃນເດືອນ 5 ຄວາມເລິກຂອງການໄຖປະມານ 20-30 ຊມ. ໄມ້ສັກທີ່ເຮົາຈະນຳມາຕັດແຕ່ງເຫງົ້າ, ມີອາຍຸປະມານ 12-14 ເດືອນ.ຊຶ່ງນອນຢູ່ໃນໜານທີ່ເຮົາກຽມມາແຕ່ປີກາຍ.

ເຮົາກໍ່ຕ້ອງໄດ້ທຳການຕົບແຕ່ງເຫງົ້າ ທັນທີໂລດ. ຂະໜາດຂອງເຫງົ້າໄມ້ສັກ, ທີ່ເໝາະສົມແກ່ການປູກ ແມ່ນຢູ່ໃນລະຫວ່າງລວງກວ້າງຂອງເຫງົ້າປະມານ 1,5-2 ຊມ ແລະ ຄວາມຍາວຂອງເຫງົ້າ 18-20 ຊມ.

ການຂຸດຂຸມ ຂະໜາດຂອງຂຸມປູກ ແມ່ນ 20x20x20 ຊມ, ສຳລັບການປູກ ແມ່ນຕົ້ນລະດູຝົນ ການປູກດ້ວຍເຫງົ້ານີ້ ແມ່ນເປັນວິທີງ່າຍດາຍ ໂດຍມີການຈະເລີນເຕີບໂຕໄດ້ໄວ. ໃສ່ຝຸ່ນແມ່ນໃສ່ປະມານ 75 ກຼາມ/ຕົ້ນ ເມື່ອເຮົາປູກໄດ້ 3 ເດືອນ ຄັ້ງທຳອິດ.

## ສາລະບານ


| | |
|---|---|
| ພາກທີ I | ໜ້າ |
| I. ສະພາບລວມ: | 1 |
| 1. ສະຖານທີ່ຕັ້ງ ແລະ ຄວາມເປັນມາຂອງສູນຄົ້ນຄ້ວາປ່າໄມ້ | 1 |
| II. ຄວາມໝາຍ ແລະ ຄວາມສຳຄັນ ຂອງການປູກປ່າ | 2 |
| 1. ຄວາມໝາຍ | 2 |
| 2. ຄວາມສຳຄັນ | 3 |
| 3. ຄຸນປະໂຫຍດ | 3 |
| 4.ຈຸດປະສົງ | 3 |
| ພາກທີ II | |
| ການສ້າງຕັ້ງສວນປູກ | 6 |
| I. ການກະກຽມສະຖານທີ່ | 6 |
| 1. ການກະກຽມກ່ອນຈະປູກ | 6 |
| 2. ການປັກຫຼັກໝາຍຂຸມປູກ | 6 |
| 3. ການກະກຽມເຫງົ້າ | 9 |
| 3.1 ການຕົບແຕ່ງເຫງົ້າ | 9 |
| 4. ຂະໜາດຂອງເຫງົ້າ | 9 |
| 4.1 ການວາງແຜນການປູກ | 11 |
| 4.2 ການຂຸດຂຸມ | 12 |
| 4.3 ການປູກ | 13 |
| 4.4 ການປູກຊ້ອມ | 14 |
| # ການສ້າງດອນຕົວຢ່າງ | 14 |
| 4.5 ການໃສ່ຝຸ່ນ | 15 |
| 4.6 ການກຳຈັດວັດສະພືດ | 16 |

ພາກທີ III

ພາກໄລ່ລຽງເສດຖະກິດ 18

ພາກທີ IV

ສະຫລຸບລວມ ການຈັດການຄຸ້ມຄອງ ຂອງວຽກງານປູກປ່າ 19

## ສາລະບານຮູບ

1. ແຜນວາດເຂດຄຸ້ມຄອງ ຂອງສູນຄົ້ນຄ້ວາປ່າໄມ້ 4
2. ໂຄງຮ່າງ ການຈັດຕັ້ງ ສູນຄົ້ນຄ້ວາປ່າໄມ້ 5
3. ການກະກຽມເທົ້າ ໃນໝານກ້າ 8
4. ການຕົບແຕ່ງເຫງົ້າ 10
5. ຂັ້ນຕອນ ການກຳຈັດວັດສະພືດ 17

ໝາຍເຫດ:

1. ຕາຕະລາງ ປະຕິບັດວຽກງານ 7
2. ຕາຕະລາງ ການຈັດສັນປູກ 13
3. ຕາຕະລາງ ບົວລະບັດຮັກສາ 16

## I. ສະພາບລວມ

ສູນຄົ້ນຄ້ວາວິທະຍາປ່າໄມ້ ໄດ້ສ້າງຕັ້ງຂຶ້ນປີ 1981 ເຊິ່ງເປັນສູນໜຶ່ງທີ່ຂຶ້ນກັບອົງການວິທະຍາປ່າໄມ້ຂອງກົມປ່າໄມ້, ກະຊວງ ກະສິກຳ ແລະ ປ່າໄມ້ ຕັ້ງຢູ່ຕໍ່ໜ້າທາດດຳ ສູນດັ່ງກ່າວແມ່ນສູນທົດລອງພັນໄມ້ຫຼາຍຊະນິດຂອງພາຍໃນ ແລະ ຕ່າງປະເທດ ເພື່ອເກັບກຳຂໍ້ມູນປະກອບເອກະສານ ແລະ ແຈກຢາຍໃຫ້ບັນດາແຂວງຕ່າງໆ ເພື່ອໄດ້ນຳໃຊ້ເຂົ້າໃນປ່າປູກ.

### 1. ສະຖານທີ່ຕັ້ງ ແລະ ປະຫວັດຄວາມເປັນມາຂອງສູນຄົ້ນຄ້ວາໄມ້.

ສູນຄົ້ນຄ້ວາປ່າໄມ້ ແມ່ນສູນໜຶ່ງທີ່ທຳການຄົ້ນຄ້ວາທົດລອງ ກ່ຽວກັບດ້ານວຽກງານປ່າໄມ້ໂດຍກົງເຊິ່ງມີສະຖານທີ່ຕັ້ງຢູ່ເມືອງນາຊາຍທອງ ກຳແພງນະຄອນວຽງຈັນ. ຕາມເສັ້ນທາງເລກທີ່ 13 ເໜືອ ຫ່າງຈາກນະຄອນຫຼວງວຽງຈັນ ປະມານ 38 ກິໂລແມັດ ມີເສັ້ນທາງແຍກເຂົ້າທາງເບື້ອງຊ້າຍມື ຂອງບ້ານນາງ່າ ປະມານ 4 ກິໂລແມັດ ລວມທັງໝົດປະມານ 42 ກິໂລແມັດ ເຊິ່ງມີເສັ້ນທາງຈາກນະຄອນຫຼວງວຽງຈັນ.

- ທາງທິດເໜືອຕິດກັບ ( ບ້ານ ນາເທບ)
- ທິດໃຕ້ຕິດກັບສູນຄົ້ນຄ້ວາການລ້ຽງສັດ
- ທິດຕາເວັນອອກ ຕິດກັບບ້ານ ໂພນທອງ (ບ້ານ 4) ແລະ ບ້ານໂພສີ (ບ້ານ 5)
- ທິດຕາເວັນຕົກ ຕິດກັບອ່າງ ນ້ຳຊ່ວງ.

ສູນຄົ້ນຄ້ວາປ່າໄມ້ ເຊິ່ງແຕ່ກ່ອນເອີ້ນວ່າສວນກ້າເບ້ຍໄມ້ນ້ຳຊ່ວງ ທີ່ສ້າງຕັ້ງຂຶ້ນໃນປີ 1981 ໂດຍພາຍໃຕ້ການຊີ້ນຳຂອງ ບໍລິສັດ ວິສະຫະກິດປ່າໄມ້ ເລກ 3. ຈຸດປະສົງ: ໃນສະໄໝນັ້ນແມ່ນເພື່ອກ້າເບ້ຍ ແລະ ປູກໄມ້ໃຫ້ເປັນປ່າ ເພື່ອປ້ອງກັນສະພາບແວດລ້ອມຕາມບໍລິເວນ ອ່າງນ້ຳຊ່ວງ, ທີ່ຕັດໄມ້ທຳລາຍປ່າຢ່າງຊະຊາຍ ແລະ ເພື່ອຄວາມເປັນຮົ່ມບໍລິເວນອ່າງ.

ປີ 1985 ສູນໄດ້ເປັນສ່ວນປະກອບໜຶ່ງ ຂອງໂຄງການຮ່ວມມືປ່າໄມ້ລາວ-ຊູແອດ ແລະໄດ້ປ່ຽນຊື່ມາເປັນສວນກ້າເບ້ຍໄມ້ ແລະ ປູກໄມ້ນ້ຳຊ່ວງ, ມາເປັນສູນຄົ້ນຄ້ວາວິທະຍາປ່າໄມ້ນ້ຳຊ່ວງເປັນຕົ້ນມາ, ສູນຄົ້ນຄ້ວາວິທະຍາປ່າໄມ້ ມີເນື້ອທີ່ທັງໝົດປະມານ 41.79 ເຮັກຕາ.

- ເນື້ອທີ່ປູກໄມ້ສຳເລັດແລ້ວມີທັງໝົດ 417.9 ເຮັກຕາ.
- ເນື້ອທີ່ສວນປູກໄມ້ທົດລອງ 58 ເຮັກຕາ.
- ຄວາມສູງຈາກລະດັບໜ້ານ້ຳທະເລ 180 m
- ອຸນະພູມສະເລ່ຍ 26.7ອົງສາ
- ອຸນະພູມຕ່ຳສະເລ່ຍ 22.4ອົງສາ
- ອຸນະພູມສູງສຸດສະເລ່ຍ 29.3ອົງສາ
- ຄວາມຊຸ່ມຊື່ນສະເລ່ຍ 78%
- ປະລິມານນ້ຳຝົນສະເລ່ຍ 1.500mm / ປີ
- ລັກສະນະຂອງດິນເປັນດິນແກມຊາຍ (Haplic Aerisol) ຄ່າສະເລ່ຍ PH= 5.4

ລັກສະນະພື້ນທີ່ທົ່ວໄປຂອງສູນກ່ອນການປູກໄມ້, ເມື່ອກ່ອນເປັນປ່າເລົ່າອ່ອນທີ່ປົກຫຸ້ມໄປດ້ວຍປ່າຟຸ່ມ ແລະ ຫຍ້າຊະນິດຕ່າງໆທີ່ມີຄຸນຄ່າເກີດຂື້ນ ເຊັ່ນ: ໄມ້ປ່ອງ, ໄມ້ດູ່, ໄມ້ເປືອຍ, ໄມ້ສະຄານ ແລະ ອື່ນໆເວົ້າໂດຍທົ່ວໄປແລ້ວແມ່ນຈັດຢູ່ໃນປະເພດພື້ນທີ່ປ່າເຊື່ອມໂຊມ.ສະພາບຂອງໜ້າດິນມີມີຄວາມຄ້ອຍຊັນ ປະມານ 60% ເນື້ອທີ່ດັ່ງກ່າວແມ່ນໄດ້ສຳເລັດການປູກໄມ້ໂດຍສ່ວນໃຫຍ່ແມ່ນປູກພັນໄມ້ພື້ນເມືອງເຊັ່ນ: ໄມ້ແຕ້, ໄມ້ສະຝາງ, ໄມ້ສັກ ແລະ ໄມ້ຕ່າງປະເທດເຊັ່ນ: ໄມ້ວິກ,ໄມ້ກະຖິນເທພາ ແລະ ໄມ້ກະຖິນນະລົງ.

## II. ຄວາມໝາຍ ແລະ ຄວາມສຳຄັນຂອງການປູກປ່າ:

### 1. ຄວາມໝາຍ:

ການປູກສ້າງສວນປ່າ ແມ່ນໝາຍເຖິງການສ້າງເນື້ອທີ່ດິນຕອນໃດຕອນໜຶ່ງທີ່ຢູ່ໃນສະພາບປ່າຊຸດໂຊມ, ທີ່ດິນປອກໂລ້ນບໍ່ ມີປ່າປົກຫຸ້ມເນື່ອງຈາກການທຳລາຍປ່າຢ່າງຊະຊາຍ, ໃນເມື່ອກ່ອນເປັນປ່າທີ່ອຸດົມສົມບູນໂດຍມີການຈັດຕັ້ງຄຸ້ມຄອງ ແລະ ນຳໃຊ້ຢ່າງຖືກຕ້ອງການເຮັດວຽກແມ່ນປະຕິບັດຕາມແຕ່ລະຂັ້ນຕອນ, ນັບແຕ່ການວາງແຜນເກັບ

ແກ່ນ ການກະຕຸ້ນແກ່ນ, ການກ້າແກ່ນ, ການບຳລຸງຮັກສາເບັ້ຍໄມ້, ການປູກທົດລອງທົ່ວໄປຕະຫຼອດເຖິງການບົວລະບັດຮັກສາ ແລະ ອື່ນໆ ທັງມີແຜນການລະອຽດ.

2. ຄວາມສຳຄັນ:

ຄືດັ່ງທີ່ພວກເຮົາຮູ້ນຳກັນແລ້ວວ່າ ປ່າໄມ້ຂອງປະເທດລາວເຮົາໃນປະຈຸບັນນີ້ ນັບມື້ນັບລຸດນ້ອຍຖອຍລົງຢ່າງໜ້າວິຕົກຫຼາຍຈະເຫັນໄດ້ໃນໄລຍະຜ່ານມາ ພວກເຮົາໄດ້ສູນເສຍເນື້ອທີປ່າໄມ້ໄປຫຼາຍແສນເຮັກຕາເຮັດໃຫ້ສະພາບທັງໝົດກ້າວເຂົ້າສູ່ເຂດໄພອັນຕະລາຍ, ໃນອານະຄົດ ກໍຈະເກີດນ້ຳຖ້ວມ, ດິນຖືກເຊາະເຈື່ອນ, ເກີດໄພແຫ້ງແລ້ງ ແລະ ອາກາດຮ້ອນເອົ້າຜິດປົກກະຕິ. ອັນທີ່ສົ່ງຜົນສະທ້ອນບໍ່ດີຕໍ່ການດຳລົງຊີວິດຂອງພໍ່ແມ່ປະຊາຊົນລາວເຮົາ ສາຍເຫດນີ້,ແມ່ນຍ້ອນການທຳລາຍປ່າໄມ້ ຂອງພໍ່ແມ່ປະຊາຊົນທີ່ດຳລົງຊີວິດຢູ່ໃນປ່າໄມ້ເຂດພູດອຍ ຍ້ອນຄວາມບໍ່ເຂົ້າໃຈຕໍ່ການຄຸ້ມຄອງ, ການນຳໃຊ້, ການປົກປັກຮັກສາ ແລະ ການຟື້ນຟູປ່າ. ດັ່ງນັ້ນ, ພວກເຮົາກໍຕ້ອງໄດ້ມີການສ້າງສວນປູກໄມ້ຂຶ້ນຢູ່ຕາມແຕ່ລະບ່ອນທີ່ມີຄວາມເໝາະສົມ.

3. ຄຸນປະໂຫຍດ:

ການທີ່ພວກເຮົາໄດ້ສ້າງສວນປູກໄມ້ນັ້ນແມ່ນມີຄຸນປະໂຫຍດຫຼາຍເພາະໄມ້ທີ່ພວກເຮົາປູກນັ້ນແມ່ນສາມາດນຳເອົາມາເຮັດໄມ້ເຮືອນ, ເຮັດເຟີນີເຈີ, ເຮັດໄມ້ປູພື້ນ ແລະ ອື່ນໆ ແລະກໍມີຄຸນຄ່າທາງດ້ານເສດທະກິດ ພວກເຮົາກໍສາມາດນຳເອົາໄມ້ມາເຮັດໄມ້ແປຮູບ ແລະ ໄມ້ອັດ.ເຊິ່ງເຮົາສາມາດນຳເອົາເອກະສານ ຫຼາຍເຫຼັ້ມມາລວມເຊັ່ນ: ໄດ້ມາຈາກເອກະສານອ້າງອີງຂອງ (ນ. ວິໄລລັກ) ແລະ ຫຼາຍຄົນ.

4. ຈຸດປະສົງ ໃນການລົງຝຶກຫັດ.

- ເພື່ອຊອກຫາເຕັກນິກໃນການປູກໄມ້ສັກ.
- ເພື່ອເຜີຍແຜ່ເຕັກນິກ ດັ່ງກ່າວອອກສູ່ສັງຄົມ

# ແຜນວາດເຂດຄຸ້ມຄອງຂອງສູນຄົ້ນຄ້ວາປ່າໄມ້




ເນື້ອທີ່ປູກໄມ້ :

| ປີປູກ | ເນື້ອທີ່ (Ha) | ເນື້ອທີ່ຕົ້ນຢາງ (Ha) |
|---|---|---|
| 1980-1985 | 128 | |
| 1986-1990 | 134.5 | 51.5 |
| 1991-1995 | 88.5 | 5 |
| 1996-2000 | 10 | |
| ລວມ (Ha): | 360.5 | 56.5 |
| ລວມທັງໝົດ: (Ha) | 417 ha | |

→ ທາງອອກໄປຫາເສັ້ນທາງ 13 ເໜືອ

ເຄື່ອງໝາຍ :

| | |
|---|---|
| ■ | ອາຄານ |
| ສ.ວ | ສວນກ້າ |
| ▫ | ເຂດແດນ |
| - - - - - | ເສັ້ນທາງ |
| ........ | ແດນປ່າປູກ |

# ໂຄງຮ່າງການຈັດຕັ້ງ, ສູນຄົ້ນຄ້ວາປ່າໄມ້



## ພາກທີ II
## ການສ້າງຕັ້ງສວນປູກ

I. ການກະກຽມສະຖານທີ່:

ການກະກຽມສະຖານທີ່ປູກ ກ່ອນອື່ນໝົດຕ້ອງມີການສຳຫຼວດ ເພື່ອຢາກຮູ້ການຈັດເນື້ອທີ່ທັງໝົດ, ສຳລັບການປູກເມື່ອເຮົາສຳຫຼວດເນື້ອທີ່ເປັນທີ່ຮຽບຮ້ອຍແລ້ວ ເຮົາກໍ່ສາມາດຮູ້ຈັກວ່າສະຖານທີ່ໆນັ້ນເປັນສະຖານທີ່ແນວໃດ ມີຄວາມຄ້ອຍຊັນ ຫຼື ຮາບພຽງຕ້ອງຮູ້ຈັກປະເພດຂອງປ່າເຊັ່ນ: ປ່າເລົ່າອ່ອນ ຫຼື ເປັນປ່າທີ່ຖືກທຳລາຍ ຕົວຢ່າງ: ມີເນື້ອທີ່ 1 ເຮັກຕາ ເມື່ອເປັນເຊັ່ນນັ້ນແລ້ວພວກເຮົາກໍ່ຕ້ອງມີການບຸກເບີກເນື້ອທີ່ດັ່ງກ່າວ ດ້ວຍການໃຊ້ແຮງງານຂອງຄົນຖາງໃຫ້ກ້ຽງ ເຮົາເລີ່ມຖາງປ່າ ຫຼື ຕັດຕົ້ນໄມ້ໃນເດືອນ1 (ມັງກອນ) ເມື່ອເຮົາຖາງປ່າສຳເລັດແລ້ວກໍ່ຕ້ອງໄດ້ມີການຈູດໆ ໃນເດືອນ4 (ເມສາ) ກ່ອນໜ້າປີໃໝ່ລາວເພາະວ່າຊ່ວງເວລານີ້ແມ່ນເໝາະສົມການຈູດຮື້ ເນື້ອທີ່ສຳລັບປູກພືດຕ່າງໆໃນລາວເຮົາ.

1.ການກະກຽມກ່ອນຈະປູກ:

ພື້ນທີ່ສຳລັບປູກໄມ້ໃນກໍລະນີທີ່ຈະນຳໃຊ້ກົນຈັກເຂົ້າມາໃນການກະກຽມດິນ ເຮົາຕ້ອງມີການໄຖເນື້ອທີ່ດັ່ງກ່າວ ເຮົາຄືເລີ່ມໄຖດ້ວຍການນຳໃຊ້ລົດໄຖ, ໄຖ ໃນຕົ້ນເດືອນ (ພຶດສະພາ) ໄຖເລິກປະມານ 20-30 ຊມ ການໄຖນີ້ແມ່ນເພື່ອເຮັດໃຫ້ດິນທີ່ເຮົາຈະປູກນັ້ນ ສາມາດກຳຈັດວັດສະພືດ, ຂ້າເຊື້ອລາສ່ວນໃດສ່ວນໜຶ່ງໃນດິນ ແລະ ເປັນການກະກຽມດິນ ກໍ່ເພື່ອເຮັດໃຫ້ດິນຜຸຜຸ່ຍດີ.

2. ການປັກຫຼັກໝາຍຂຸມປູກ.

ສຳຫຼັບການໄຖນີ້ ຕ້ອງໄຖໄປຕາມທິດໃຕ້ຫາທິດເໜືອ(ທິດຕາເວັນອອກ ຫາ ທິດຕາເວັນຕົກ) ພາຍຫຼັງທີ່ໄຖສຳເລັດ ຕ້ອງມີການປັກຫຼັກໝາຍຂຸມປູກ,ການປັກຫຼັກນັ້ນແມ່ນຮຽກຮ້ອງ ເຖິງການນຳໃຊ້ແຮງງານຂອງຄົນ ຢ່າງໜ້ອຍມີປະມານ 10 ຄົນ ປະກອບດ້ວຍໜ້າວຽກດັ່ງລຸ່ມນີ້:

ເຮົາທຳການຍິງແລວແມ່ ໂດຍໃຊ້ເຂັມທິດຍິງໄປຕາມມູມ ຕາມເນື້ອທີ່ຕົວຈິງ ແລະສຳຄັນແລວແມ່ທີ່ 1 ຕ້ອງໃຊ້ມູມ 90 ອົງສາ ການປັກຫຼັກໝາຍຂຸມປູກ ນັ້ນຕ້ອງໃຊ້ຄົນ 2 ຄົນ ຈັບເຊືອກແມັດ 2 ສົ້ນ ແລະ ດຶງໃຫ້ເຄັ່ງດີເມື່ອປັກຫຼັກໝາຍສຳເລັດແລ້ວ ເຮົາກໍ່ຕ້ອງ

ທຳໜ້າທີ່ດຶງໄມ້ແມັດເດີນໜ້າໄປຫາຈຸດມຸ້ງໝາຍທີ່ຍິງແລວໄປໂດຍໃຊ້ຫຼັກແນສຳລັບເຄື່ອນຍ້າຍໄປເທື່ອລະຫວ່າງ 3 m ຜູ້ທີ່ຢູ່ 2 ສົ້ນຂອງເຊືອກແມັດມີໜ້າທີ່ດຶງເຊືອກແມັດໃຫ້ເຄັ່ງ ສ່ວນທີ່ຍັງເຫຼືອ 8 ຄົນນັ້ນກໍເຮັດໜ້າປັກຫຼັກ (ຜູ້ 1 ຈະຮັບຜິດຊອບປະມານ 4 ຫຼັກ) ແລ້ວກໍຖອຍຫຼັງໄປເລື້ອຍໆຈົນກ່ວາຈະສຳເລັດໃນເຮັກຕາໜຶ່ງ.

ຕາຕະລາງ ປະຕິບັດວຽກງານ

| ລ/ດ | ວຽກທີ່ປະຕິບັດ | ໄລຍະການປະຕິບັດວຽກງານ | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | | 11 | 12 | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 |
| 1. | ສຳຫຼວດພື້ນທີ່ | | | | | | | | | | | | |
| 2. | ຂໍອະນຸຍາດປູກສ້າງສວນປ່າ | | | | | | | | | | | | |
| 3. | ການສ້າງທາງສວນປ່າ | | | | | | | | | | | | |
| 4. | ການກຽມເຫງົ້າໄມ້ | | | | | | | | | | | | |
| 5. | ການກຽມຂຸມໝາຍປູກ | | | | | | | | | | | | |
| 6. | ການຖາງປ່າ | | | | | | | | | | | | |
| 7. | ການຈູດເຜົາ | | | | | | | | | | | | |
| 8. | ການປັກຫຼັກໝາຍປູກ | | | | | | | | | | | | |
| 9. | ປູກ ແລະ ປູກລ້ອມ | | | | | | | | | | | | |
| 10. | ໃສ່ປຸຍ | | | | | | | | | | | | |
| 11. | ກຳຈັດ ວັດສະພືດ | | | | | | | | | | | | |
| 12. | ສຳຫຼວດປະເມີນຜົນ | | | | | | | | | | | | |
| 13. | ການປ້ອງກັນໄຟ | | | | | | | | | | | | |

ຂັ້ນຕອນການກຽມເບ້ຍໄມ້ສັກ ໃນໜານກ້າ





3. ການກຽມເຫງົ້າ (ໃນສວນກ້າ)

ໄມ້ສັກທີ່ເຮົາຈະນຳມາຕັດແຕ່ງເຫງົ້າ ມີອາຍຸປະມານ 12-14 ເດືອນ ທີ່ນອນຢູ່ໃນໜານທີ່ໄດ້ກະກຽມມາແຕ່ປີກາຍ ແມ່ນເຮົາຕ້ອງໃຊ້ໝາກຈົກຂຸດຂຶ້ນມາຈາກໜານ ຫຼື ໃຊ້ແຮງງານຂອງຄົນດຶງຂຶ້ນມາ ແຕ່ຕ້ອງມີຄວາມລະມັດລະວັງບໍ່ໃຫ້ກະທົບຕໍ່ເຫງົ້າ ໄມ້ສັກ ຫຼື ເຮັດໃຫ້ເຫງົ້າຂອງເປືອກແຕກຫັກ ຫຼື ກະທົບຕາ ( ທີ່ມີຄວາມສາມາດແຕກເປັນຍອດໃໝ່ຂອງເຫງົ້າໄມ້ສັກ ).

3.1 ການຕົບແຕ່ງເຫງົ້າ:

ພາຍຫຼັງທີ່ໄດ້ຂຸດເບ້ຍໄມ້ສັກຂຶ້ນມາຈາກໜານແລ້ວ ເຮົາຕ້ອງໄດ້ທຳການຕົບແຕ່ງເຫງົ້າທັນທີໂລດ ກ່ອນອື່ນຕ້ອງທຳການຕັດຮາກຝອຍອອກໃຫ້ໝົດບໍ່ວ່າຮາກຝອຍ ຫຼື ຮາກນ້ອຍ ແລະ ກໍທຳການຕັດຮາກແກ້ວຖີ້ມ (ພາກສ່ວນລຸ່ມ) ຕັດດ້ວຍມີດທີ່ແຫຼມຄົມດີ ຫຼັງຈາກນັ້ນກໍທຳການຕັດລຳຕົ້ນ ຈົ່ງໄວ້ປະມານ 2-3 ຊມ ກາຍບ່ອນດິນຖົມ ການຕັດລຳຕົ້ນຕ້ອງເຮັດດ້ວຍຄວາມລະມັດລະວັງຄື: ບໍ່ໃຫ້ຂະໜາດຂອງເຫງົ້າທີ່ເຮົາຈົ່ງໄວ້ນັ້ນ ແຕກລວງຍາວຂອງເຫງົ້າແມ່ນ 18-20 ຊມ ເປືອກຂອງເຫງົ້າແຕກ ຫຼື ໂດຍການຕັດແມ່ນຕັດສະຫຼຽງດ້ວຍມູມ 45 ອົງສາ ທີ່ເຮົາຕັດສະຫຼຽງນີ້ກໍເພື່ອວ່າເວລາທີ່ເຮົາປູກ ຖ້າເກີດມີຝົນຕົກເພື່ອປ້ອງກັນບໍ່ໃຫ້ມັນເໜົ່າເປື່ອຍ.

ພາຍຫຼັງທີ່ເຮົາທຳການຕົບແຕ່ງເຫງົ້າເປັນທີ່ຮຽບຮ້ອຍແລ້ວ ເຮົາກໍຕ້ອງນຳເອົາເຫງົ້າດັ່ງກ່າວມາມັດເປັນຢ່າງດີ ການມັດເຫງົ້າຄວາມບັນຈຸແຕ່ລະມັດມີທັງໝົດ 50 ເຫງົ້າ ດ້ວຍການນຳໃຊ້ເຊືອກຟາງມັດ 2 ຍ່ານຂອງເຫງົ້າຄື: ຢູ່ເບື້ອງເທິງ ແລະ ເບື້ອງລຸ່ມ ແຕ່ຕ້ອງລະມັດລະວັງບໍ່ໃຫ້ມັດຖືກຕາແລ້ວເຮົາກໍຄ່ອຍໆ ເກັບລົງໃສ່ກະເປົາປ່ານເທື່ອລະມັດ ແລ້ວກໍທຳການມັດປາກຖົງໃຫ້ແໜ້ນ ເພື່ອສະດວກໃນການຂົນສົ່ງ. ຫຼັງຈາກນັ້ນ, ກໍເກັບຮັກສາໄວ້ບ່ອນທີ່ຮົ່ມ ແລະ ສາມາດໃຫ້ນ້ຳ 2-3 ຄັ້ງ/ອາທິດ ເຮົາສາມາດເກັບຮັກສາໄວ້ດົນນານປະມານ 7 ວັນ ກ່ອນຈະນຳໄປປູກ.

4. ຂະໜາດຂອງເຫງົ້າ:

ດັ່ງທີ່ພວກເຮົາຮູ້ກັນແລ້ວວ່າ ໂດຍທົ່ວໄປແລ້ວຂະໜາດຂອງເຫງົ້າໄມ້ສັກ ທີ່ເໝາະສົມແກ່ການປູກແມ່ນຢູ່ໃນລະວາງລວງກ້ວາງຂອງເຫງົ້າ1.5-2.0 ຊມ ແລະ ລວງຍາວຂອງເຫົງາ18-20 ຊມ , ເຫງົ້າໄມ້ສັກທີ່ເຮົາກະກຽມໄວ້ແລ້ວນັ້ນຄວນບັນຈຸໄວ້ໃນກະເປົາປ່ານ

ແລະ ເກັບຮັກໄວ້ບ່ອນທີ່ຮົ່ມເຢັນ. ຖ້າຫາກວ່າເຮົາຈຳເປັນຈະເກັບຮັກສາເຫງົ້າໄມ້ສັກໄວ້ ປະມານ 7 ມື້ ເຮົາກໍຕ້ອງຫົດນ້ຳໃສ່ກະເປົາປານ ທີ່ບັນຈຸເຫງົ້າໄມ້ສັກໄວ້ແລ້ວນັ້ນໃຫ້ຊຸ່ມ ປຽກຢູ່ເລື້ອຍໆ.

ການຕັດແຕ່ງເຫງົ້າໄມ້ສັກ





4.1 ການວາງແຜນການປູກ:

ການວາງແຜນການປູກ ແມ່ນຂຶ້ນກັບຊະນິດພັນໄມ້ ແລະ ປະເພດຂອງປ່າປູກ. ເມື່ອທຳການສຳຫຼວດຂໍ້ມູນໃນພື້ນທີ່ແລ້ວກໍ່ດຳເນີນການວັດແທກເພື່ອໃຫ້ໄດ້ຂອບເຂດພື້ນທີ່ແນ່ນອນ. ເພັ້ນໜັກໃສ່ຈຸດປະສົງໃນການປູກປ່າ, ປົກກະຕິຈະໃຊ້ມາດຕາສ່ວນ 1/500 ຫຼື 1/1000 ໃນເວລາດຽວກັນກໍ່ດຳເນີນລາຍລະອຽດລົງໃນແຜນທີ່. ຊຶ່ງໄດ້ແກ່ແນວທາງທີ່ເໝາະສົມ ໃນການສ້າງທາງປ່າໄມ້ ແລະ ການແບ່ງແປງຍ່ອຍ. ໃນກໍລະນີ ປູກໄມ້ຫຼາຍຊະນິດ, ກໍ່ກຳນົດແລວປ້ອງກັນໄຟ.

ສະນັ້ນ, ຈຶ່ງນຳວິທີການຄິດໄລ່ ແລະ ວິທີຂຶ້ນແຜນແບບງ່າຍດາຍ. ເພື່ອໃຫ້ປະຊາຊົນຕາມລຳດັບບ້ານ ໃຫ້ມີຄວາມຮັບຮູ້ ຫຼື ເຂົ້າໃຈງ່າຍຂຶ້ນ.

# ຂໍ້ມູນ ຫຼື ການຄິດໄລ່ ຄວນໃຫ້ໄດ້ດັ່ງນີ້:

- ການຂຶ້ນແຜນເນື້ອທີ່ເປັນເຮັກຕາ.
- ຊະນິດພັນໄມ້ ທີ່ຈະໃຊ້ປູກ.
- ການຄາດຄະເນຮອບໝູນວຽນ.
- ສະຖານທີ່ຈະປູກ.
- ໄລຍະຫ່າງຕົ້ນໄມ້ ທີ່ຈະປູກ.
- ຈຳນວນເບ້ຍໄມ້ ທີ່ຕ້ອງການທັງໝົດ.
- ຈັດຕາຕະລາງວາງແຜນງານ ສຳລັບການຈັດສັນການປູກ ຈັດວາງເວລາໃນການເລີ່ມປະຕິບັດວຽກງານສວນກ້າ ໃຫ້ຖືກຕ້ອງຕາມເວລາ ແລະ ໃຫ້ມີເບ້ຍໄມ້ຢ່າງພຽງພໍ. ສຳລັບການນຳໄປປູກໃຫ້ຖືກຕ້ອງຕາມລະດູການ.
- ຜູ້ຮັບຜິດຊອບສຳລັບການສ້າງສວນປ່າ.

ສຳລັບການສ້າງປ່າປູກສ່ວນໃຫຍ່ ຂອງໄລຍະຫ່າງ ແລະ ຈຳນວນຂອງຕົ້ນໄມ້ ທີ່ມັກໃຊ້ແມ່ນ:

| | | | |
|---|---|---|---|
| - ໄລຍະແຄບ: | ປູກໃນເນື້ອທີ່ 1 ຮຕ | | |
| ປູກໄລຍະຫ່າງ | 1 x1 ມ | = | 10.000 ຕົ້ນ |
| | 1 x 2ມ | = | 5.000 ຕົ້ນ |
| | 2 x 2ມ | = | 2.500 ຕົ້ນ |

ສູນຄົ້ນຄວ້າປ່າໄມ້
ຫ້ອງສະໝຸດ
ເລກທະບຽນ:...............
ເລກໝູ່ໜັງສື:...............
ວັນທີ:...............

- ຖ້າປູກໄລຍະກວ້າງ ປູກໃນເນື້ອທີ່ 1 ຮຕ

| | | |
|---|---|---|
| ປູກໄລຍະຫ່າງ | 2x3ມ = | 1666 ຕົ້ນ |
| | 2x4ມ = | 1250 ຕົ້ນ |
| | 3x3ມ = | 1089 ຕົ້ນ |
| | 3x4ມ = | 833 ຕົ້ນ |
| | 4x4ມ = | 699 ຕົ້ນ |
| | 2x8ມ = | 699 ຕົ້ນ |

4.2 ການຂຸດຂຸມ:

ວິທີຂຸດຂຸມປູກແມ່ນ ເຮົາໃຊ້ຈົກຂຸດໃຫ້ຊື່ຕົງ (ຕັ້ງສາກ) ກັບໜ້າດິນໃຫ້ເປັນຮູບທໍ່ ຫຼື ຮູ ຈະຕຸລັດຕາມຂະໜາດທີ່ຕ້ອງການເຮົາຄວນເອົາໃຈໃສ່ແລະຂຸດໃຫ້ຕາມຂະໜາດທີ່ຕ້ອງການ 20x20x20 ຊມ. ການຂຸດຂຸມເມື່ອເຮົາຂຸດ ຕ້ອງຂຸດທາງທິດຕາເວັນອອກຂອງຂ້າງຫຼັກ ສະເໝີໄປ ເພາະຈະເຮັດເປັນແຖວຂອງຕົ້ນໄມ້ນັ້ນສະໝ່ຳສະເໝີ ແລະ ຊື່ດີ. ຖ້າຫາກເຮົາຂຸດທາງທິດຕາເວັນຕົກນັ້ນ ຈະເຮັດໃຫ້ແຖວນັ້ນບໍ່ສະໝ່ຳສະເໝີກັນ, ເວລາຂຸດດິນສິ່ງທີ່ສຳຄັນແມ່ນເຮົາ ແຍກຊັ້ນດິນ ແລະ ຄຸນນະພາບຂອງດິນເປັນສ່ວນຄື: ຂຸດເອົາດິນຊັ້ນເທິງ (ໜ້າດິນ) ກອງໄວ້ບ່ອນໜຶ່ງ ແລະ ດິນຊັ້ນລຸ່ມກອງໄວ້ບ່ອນໜຶ່ງເພາະວ່າ ຫຼັງຈາກຂຸດແລ້ວ ຕ້ອງເອົາດິນຊັ້ນເທິງຮອງພື້ນກ່ອນ ເພາະດິນຊັ້ນເທິງເປັນດິນທີ່ອຸດົມສົມບູນ ແລະບັນຈຸທາດອິນຊີວັດຖຸ ຫຼາຍ ສາມາດຕອບສະໜອງອາຫານໃຫ້ແກ່ຕົ້ນໄມ້ໄດ້ໄວ ໂດຍສະເພາະແມ່ນທາງພາກສ່ວນຮາກ ສ່ວນດິນຊັ້ນລຸ່ມແມ່ນໄວ້ປົກໜ້າເທິງ.

ຕາຕະລາງການຈັດສັນປູກ

| ກິດຈະກຳ | ລະດູການ | ລະດູແລ້ງ | | | | ຝົນ | ຝົນທ່າງ | | ຝົນ | | | ແລ້ງ | |
|---|---|---|---|---|---|---|---|---|---|---|---|---|---|
| | | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 |
| ການສຳຫຼວດວັດແທກເນື້ອທີ່ | | x | X | | | | | | | | | | |
| ການກຳຈັດວັດສະພືດຄັ້ງທີ່ 1 | | | x | x | | | | | | | | | |
| ສຸມເຜົາ | | | | | X | | | | | | | | |
| ໄຖ | | | | | | x | | | | | | | |
| ປັກຫຼັກ | | | | | | x | | | | | | | |
| ຂຸດຂຸມປູກ | | | | | | | x | x | | | | | |
| ປູກລ້ອມ | | | | | | | | | | | | | |
| ກຳຈັດວັດສະພືດຄັ້ງທີ່ 2 | | | | | | | | | | x | | | |
| ກຳຈັດວັດສະພືດຄັ້ງທີ່ 3 | | | | | | | | | | | | x | |

4.3 <u>ການປູກ:</u>

ລະດູການສຳລັບປູກໄມ້ໃນລາວເຮົາ ສ່ວນຫຼາຍແມ່ນປູກໃນວັນທີ່ 1 ເດືອນ 6 ເຊິ່ງເປັນວັນປູກຕົ້ນໄມ້ແຫ່ງຊາດ ສຳລັບຊ່ວງເວລາທີ່ເໝາະສົມປູກຕົ້ນສັກແມ່ນ ຕົ້ນລະດູຝົນ ຄື: ທ້າຍຂອງເດືອນ(ພຶດສະພາ)ຂະໜາດຂອງຂຸມປູກໄມ້ສັກທີ່ເໝາະສົມແມ່ນ ມີໄລຍະຂະໜາດ 20x20x20 ຊມ ກ່ອນປູກກໍມີການຖົມດິນລົງພື້ນເສຍກ່ອນ, ກ່ອນຈະປູກຕ້ອງໄດ້ມີການຊີຮູດ້ວຍເຫຼັກປາຍແຫຼມ ຮູມີຂະໜາດປະມານ 20-25 ຊມ ແລ້ວກໍນຳເອົາເຫງົ້າໄມ້ທີ່ກຽມໄວ້ນັ້ນສຽບລົງໃສ່ຮູຂະໜາດ 2.5-3.5 ຊມ ແລ້ວເຮົາກໍນຳເອົາດິນພາກສ່ວນທີ່ເຮົາຂຸດອອກຈາກຂຸມນັ້ນລົງໃສ່ຂຸມ ແລ້ວຕ້ອງເອົາດິນມາຖົມຄືນ ແຕ່ສິ່ງສຳຄັນຕ້ອງຄຳໜຶງເຖິງ ວ່າດິນທີ່ຂຸດອອກມານັ້ນຕ້ອງແຍກສ່ວນເທິງ ຫຼື ສ່ວນລຸ່ມ ເວລາຖົມຕ້ອງເອົາດິນຊັ້ນເທິງຖົມກ່ອນ ຫຼັງຈາກນັ້ນຈຶ່ງເອົາດິນຊັ້ນລຸ່ມຖົມຕາມຫຼັງ ເມື່ອເຮົາຖົມດິນເປັນທີ່ຮຽບຮ້ອຍແລ້ວ ຕ້ອງຢຽບອ້ອມປາກຂຸມໃຫ້ແຈບດີບໍ່ໃຫ້ມີຊ່ອງວາງແສງແດດເຂົ້າໄປເຖິງຮາກ ຖ້າແສງແດດຊ່ອງເຂົ້າໄປໄປເຖິງຮາກໄມ້ ຈະເຮັດໃຫ້ຮາກໄມ້ນັ້ນຫ່ຽວແຫ້ງໃນທີ່ສຸດມັນກໍຈະຕາຍ ການທີ່ເຮົາປູກດ້ວຍເຫງົ້ານີ້ແມ່ນເປັນວິທີທີ່ງ່າຍ ແລະ ເຮັດໃຫ້ໄມ້ສັກຈະເລີນເຕີບໂຕໄດ້ດີ.

4.3 ການປູກຊ້ອມຄືນ:

ພາຍຫຼັງທີ່ເຮົາໄດ້ປູກເປັນທີ່ຮຽບຮ້ອຍສຳເລັດແລ້ວປະມານ 3-4 ອາທິດ ຕໍ່ມາເຮົາກໍ ຕ້ອງມີການສຳຫຼວດເບິ່ງເປີເຊັນການລອດຕາຍ ຂອງເບ້ຍໄມ້ທີ່ເຮົາປູກນັ້ນ, ຖ້າເຮົາເຫັນ ເປີເຊັນການລອດຕາຍເກີນ 80% ແມ່ນເຮົາຕ້ອງປູກຄືນ ຖ້າເປີເຊັນການລອດຕາຍແມ່ນ ຕ່ຳກ່ວາ 50% ແມ່ນເຮົາຍົກເລີກການປູກສ້ອມຄືນ ເພາະບໍ່ໄດ້ຕາມຄວາມຕ້ອງການດ້ານ ວິຊາການປ່າໄມ້.

# ການສ້າງດອນຕົວຢ່າງ:

ການສ້າງດອນຕົວຢ່າງ ແມ່ນກຳນົດຢູ່ໃນເນື້ອທີ່ 1 ຮຕ ສາມາດສ້າງດອນຕົວຢ່າງໄດ້1 ດອນ ແຕ່ເຫັນວ່າເໝາະສົມ ແຕ່ລະດອນຫ່າງກັນເທົ່າໃດ. ອັນນັ້ນ ແລ້ວແຕ່ຄວາມເໝາະ ສົມຂອງພາກພື້ນທີ່ໃນຕົວຈິງ. ພາຍຫຼັງກຳນົດວ່າງຈຳນວນດອນໄດ້ແລ້ວ, ກໍ່ດຳເນີນການ ປະຕິບັດຕົວຈິງ ໝາຍຄວາມວ່າ: ໃຊ້ແຮງງານຄົນ ປະມານ 2-3 ຄົນ ກໍ່ໄດ້ແລ້ວ ເຮັດທຸກ ດອນໃນເນື້ອທີ່ ມາສະເລ່ຍໃສ່ກັນ ໃນເນື້ອທີ່ທັງໝົດ.

| | |
|---|---|
| ດອນທີ່ 1 | ດອນທີ່ 2 |
| ດອນທີ່ 3 | ດອນທີ່ 4 |

ຕົວຢ່າງ: 4 ດອນ ປູກຕາມແຜນ, 1ດອນ ປູກໄມ້ໃສ່ ປະມານ 32 ຕົ້ນ.

1ດອນ ປະຈຸບັນຍັງມີຢູ່ 24 ຕົ້ນ ສະແດງວ່າ: ຕາຍ 8 ຕົ້ນ ໃນເນື້ອທີ່ 1ຮຕ ທີ່ ປູກໄລຍະຫ່າງ 3 x 3 ຊມ. ການຄິດໄລ່ປະເມີນຜົນການຕາຍ ໃນເນື້ອທີ່ທັງໝົດ.

ຮູ້ວ່າ : 32 ຕົ້ນ ເທົ່າກັບ 1 ດອນ ມີຕົ້ນຕາຍ 8 ຕົ້ນ. ໃນເນື້ອທີ່ເທົ່າກັບ 1 ຮຕ ປູກໄມ້ໄດ້ທັງໝົດ 1098 ຕົ້ນ.

ຮູ້ວ່າ: 32 ຕົ້ນ ----------> 8 ຕົ້ນ

1089 ຕົ້ນ --------> X

$$X = \frac{1089 \text{ ຕົ້ນ} \times 8 \text{ ຕົ້ນ}}{32 \text{ ຕົ້ນ}} = 272 \text{ ຕົ້ນ}$$

X = 272 ຕົ້ນ

4.5 ການໃສ່ຝຸ່ນ:

ການໃສ່ຝຸ່ນແມ່ນບັນຫາໜຶ່ງທີ່ສຳຄັນ ທີ່ເຮັດໃຫ້ຕົ້ນໄມ້ມີການຈະເລີນເຕີບໂຕໄດ້ດີ ແລະ ໄວຂຶ້ນ ແຕ່ການໃສ່ຝຸ່ນກໍບໍ່ໝາຍຄວາມວ່າ ຈະໃສ່ໄດ້ຕາມໃຈກ່ອນຈະໃສ່ຝຸ່ນໃຫ້ຕົ້ນໄມ້ທຸກຄັ້ງຕ້ອງມີການພິຈາລະນາ ເຖິງເວລາໄລຍະອາຍຸການຂອງຕົ້ນໄມ້ເສຍກ່ອນ ຊະນິດຂອງຝຸ່ນ ແລະ ປະລິມານການໃສ່ອີກດ້ວຍ.

ສຳລັບການໃສ່ຝຸ່ນແມ່ນໄດ້ແບ່ງອອກດັ່ງລຸ່ມນີ້ຄື:

- ໄລຍະທີ 1 ແມ່ນໃສ່ພາຍຫຼັງປູກສຳເລັດໄດ້ 3 ເດືອນແມ່ນໃສ່ 75g/ຕົ້ນ
- ໄລຍະທີ 2 ແມ່ນໃສ່ຕອນອາຍຸໄດ້ 12 ເດືອນແມ່ນໃສ່ປະມານ 75g/ຕົ້ນ

ການທີ່ເຮົາໃສ່ຝຸ່ນນີ້ແມ່ນໃສ່ຝຸ່ນ NPK ສູດ 15.15.15 ວິທີການໃສ່ຝຸ່ນແມ່ນເຮົາຕ້ອງຂຸດຂຸມເຄິ່ງຮູບວົງມົນອ້ອມຕົ້ນໄມ້ ແລະ ມີໄລະຫ່າງຈາກຕົ້ນແມ່ນ 25-30 ຊມ ຄວາມກວ້າງຂອງຂຸມແມ່ນ 4-6 ຊມ ແລະ ເລິກປະມານ 5-8 ຊມ ແລ້ວກໍໂຮຍຝຸ່ນໃສ່ໃຫ້ສະໝ່ຳສະເໝີໃນຮູບເຄິ່ງວົງມົນ ແລ້ວກໍທຳການຖົມດິນດ້ວຍມີກວດດິນປົກ ຖ້າໃນກໍລະນີທີ່ເປັນບ່ອນຄ້ອຍຊັນ ເຮົາກໍຕ້ອງໃສ່ຝຸ່ນຢູ່ທາງເບື້ອງເທິງ ຖ້າເຮົາໃສ່ຝຸ່ນຢູ່ໃກ້ກັບຮາກໄມ້ມັນໂດຍກົງປະມານ 1 ຊມ ກໍຈະຮັດໃຫ້ຕົ້ນໄມ້ຫ່ຽວແຫ້ງ ຫຼື ຕາຍເພາະວ່າຊ່ວງເວລາທີ່ໃສ່ຝຸ່ນນີ້ຕົ້ນໄມ້ກໍມີອາຍຸອ່ອນນ້ອຍພຽງແຕ່ 3 ເດືອນເທົ່ານັ້ນເພາະວ່າລະບົບຮາກຂອງມັນຍັງຂະຫຍາຍຕົວບໍ່ແຂງແຮງເທົ່າທີ່ຄວນ ການໃສ່ຝຸ່ນດ້ວຍວິທີນີ້: ຈະເຮັດເປີເຊັນການລອດຕາຍຂອງຕົ້ນໄມ້ມີສູງ .

4.6 ການກຳຈັດວັດສະພືດ:

ການບົວລະບັດ (ກຳຈັດວັດສະພືດ) ເປັນວຽກງານຈຳເປັນ ແລະ ສຳຄັນຕໍ່ການຈະເລີນເຕີບຂອງຕົ້ນໄມ້ ສະນັ້ນການບົວລະບັດຮັກສາແມ່ນມີຄວາມຈຳເປັນ ທີ່ຈະຕ້ອງປະຕິບັດ ຖ້າຈະໃຫ້ສວນປູກໄມ້ຂອງເຮົາຮັບປະກັນໄດ້ດີທີ່ສຸດ ຕ້ອງໄດ້ເອົາໃຈໃສ່ບົວລະບັດເປັນພິເສດ ຄືຈະຕ້ອງໃຫ້ສວນປູກໄມ້ຖືກການບົວລະບັດຮັກສາໄປຕາມລະດູການ ຂອງຕາຕະລາງບົວລະບັດຮັກສາເພື່ອຮັບປະກັນໃຫ້ຕົ້ນໄມ້ມີການຈະເລີນເຕີບໂຕ ຢ່າງເປັນປົກກະຕິ ແລະ ຂະຫຍາຍຕົວໄວ .

ລັກຊະນະຂອງການກຳຈັດວັດສະພືດມີດັ່ງນີ້:

- ເສຍຫຍ້າດ້ວຍການພວນດິນອ້ອມຕົ້ນໄມ້ (ດ້ວຍສຽມ, ຈົກ)
- ຖາງຫຍ້າດ້ວຍ ຫຼື ຕັດຫຍ້າທັງໝົດໃນພື້ນທີ່ລາຍລະອຽດແມ່ນເບິ່ງຕາຕະລາງ

ຕາຕະລາງບົວລະບັດຮັກສາ

| ເດືອນ | ການບົວລະບັດ | | | | | ເດືອນ | | | | | | |
|---|---|---|---|---|---|---|---|---|---|---|---|---|
| | ຮັກສາ | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 |
| | ປີທີ 1 | | | | | | ປູກ | | x | | x | | x |
| | ປີທີ 2 | | | | | x | | | x | | | | x |
| | ປີທີ 3 | | | | | x | | | x | | | | x |
| | ປີທີ 4 | | | | | | X | | | | | x | |
| | ປີທີ 5 | | | | | | x | | | | | x | |



## ພາກທີ III

## ພາກຄິດໄລ່ລ່ຽງເສດຖະກິດ (ເຮັກຕາ)

ຜ່ານການລວບລວມ ແຕ່ລະຂັ້ນຕອນ ແມ່ນເຮົາສາມາດຄິດໄລ່ອອກເປັນຕົວເລກໄດ້ດັ່ງລາຍລະອຽດລຸ່ມນີ້:

ຈຳນວນຕົ້ນໄມ້ທີ່ປູກໃນ 1 ຮຕ ເທົ່າກັບ 1089 ຕົ້ນ ແຕ່ປະຈຸບັນຍັງເຫຼືອພຽງແຕ່ 997 ຕົ້ນ. ສະນັ້ນ, ເຮົາໄດ້ເປີເຊັ່ນການລອດຕາຍ ແມ່ນ:

1089 ຕົ້ນ ---------------> 100%

997 ຕົ້ນ ---------------> X

$$X = \frac{997 \text{ ຕົ້ນ} \times 100\%}{1089 \text{ ຕົ້ນ}} = 91,55\ \%$$

$$X = 91,55\ \%$$

| | | |
|---|---|---|
| ➢ ຄ່າບຸກເບີກໃຊ້ພ້າຖາງເນື້ອທີ່ | 1 ເຮັກຕາ/ | 600.000 ກີບ. |
| ➢ ຄ່າໄຖ | 1ເຮັກຕາ/ | 480.000 ກີບ. |
| ➢ ຄ່າປັກຫຼັກໝາຍ | 1ເຮັກຕາ/ | 110.000 ກີບ. |
| ➢ ຄ່າຂຸດຂຸມ | 1ເຮັກຕາ/ | 110.000 ກີບ. |
| ➢ ຄ່າປູກ | 1ເຮັກຕາ/ | 110.000 ກີບ. |
| ➢ ຄ່າເບ້ຍໄມ້ | 1ເຮັກຕາ/ | 444.400 ກີບ. |
| ➢ ຄ່າບົວລະບັດຮັກສາ | 1ເຮັກຕາ/ | 600.000 ກີບ. |

ການບົວລະບັດແມ່ນເຮົາເຮັດ 3 ເທື່ອ/ປີ ເທື່ອລະ 200.000 ກີບ

ລວມລາຍຈ່າຍທັງໝົດ 2.444.400 ກີບ.

## ພາກທີ IV

## ພາກສະຫລຸບລວມ ແລະຄຳ ຄິດຄຳເຫັນ

I. ສະຫຼຸບລວມ:

ຜ່ານການລົງຝຶກຫັດ ຢູ່ທີ່ສູນຄົ້ນຄ້ວາປ່າໄມ້ນ້ຳຊ່ວງ ເປັນເວລາ 4 ເດືອນ. ພວກນ້ອງເຫັນໄດ້ວ່າ, ຢູ່ສູນແຫ່ງນີ້ມີບັນດາ ອ້າຍ, ເອື້ອຍ, ພະນັກງານ ຕະຫຼອດຮອດພໍ່ແມ່ປະຊາຊົນ ທີ່ຢູ່ອ້ອມພາຍໃນສູນ ແມ່ນມີຈິດໃຈສາມັກຄີ ກັບບັນດາພວກນ້ອງນັກຮຽນ ທີ່ລົງມາຝຶກຫັດເປັນຢ່າງດີ ແລະ ການປະຕິບັດງານ ໄດ້ຮ່ວມໄມ້ຮ່ວມມືກັນຢ່າງແໜ້ນແຟ້ນ ຊຶ່ງມັນສະແດງອອກໃນການປະຕິບັດງານຕົວຈິງ ແລະ ການຕິດຕາມໃນການເຄື່ອນໄຫວເກັບກຳຂໍ້ມູນ. ເຫັນວ່າ: ແຕ່ລະໜ່ວຍງານ ແມ່ນໃຫ້ຄຳຄິດຄຳເຫັນໃນການເຮັດວຽກງານ ແລະ ໃຫ້ຄວາມສະດວກສະບາຍ ໃນຫຼາຍດ້ານ: ເປັນຕົ້ນແມ່ນໃຫ້ຄຳແນະນຳ ແລະ ໃຫ້ການນຳພາ ດັ່ງນັ້ນ, ສາມາດສະຫຼຸບໄດ້ດັ່ງນີ້:

ການທີ່ເຮົາຈະສ້າງສວນປ່າ ກ່ອນອື່ນໝົດ, ພວກເຮົາຕ້ອງມີການສັງລວມພື້ນທີ່ເພື່ອຢາກຮູ້ຈັກພື້ນທີ່ທັງໝົດ ເມື່ອເຮົາສຳຫຼວດເປັນທີ່ຮຽບຮ້ອຍແລ້ວ ເຮົາຕ້ອງຮູ້ຈັກສະຖານທີ່ດັ່ງກ່າວ ແລະ ພ້ອມດ້ວຍຮູ້ຈັກປະເພດຂອງປ່າ. ກໍ່ຕ້ອງໄດ້ຄຳນວນເຖິງການທີ່ເຮົາຈະບຸກເບີກອີກດ້ວຍ.ເມື່ອເຮົາຮູ້ເຊັ່ນນັ້ນແລ້ວ, ກໍ່ຕ້ອງໄດ້ມີການກຳນົດເວລາ ແລະ ພ້ອມດ້ວຍການວາງແຜນ.

1. ພື້ນທີ່ສຳລັບການປູກໄມ້, ໃນກໍລະນີທີ່ເຮົາຈະໃຊ້ກົນຈັກເຂົ້າໃນການກຽມດິນຕ້ອງໄຖໃນເດືອນ 5 ຄວາມເລິກຂອງການໄຖປະມານ 20-30 ຊມ.

2.ໄມ້ສັກທີ່ເຮົາຈະນຳມາຕັດແຕ່ງເຫງົ້າ, ມີອາຍຸປະມານ 12-14 ເດືອນ.ຊຶ່ງນອນຢູ່ໃນໜານທີ່ເຮົາກຽມມາແຕ່ປີກາຍ.

3. ເຮົາກໍ່ຕ້ອງໄດ້ທຳການຕົບແຕ່ງເຫງົ້າ ທັນທີໂລດ.

4 ຂະໜາດຂອງເຫງົ້າໄມ້ສັກ, ທີ່ເໝາະສົມແກ່ການປູກ ແມ່ນຢູ່ໃນລະຫວ່າງລວງກວ້າງຂອງເຫງົ້າປະມານ 1,5-2 ຊມ ແລະ ຄວາມຍາວຂອງເຫງົ້າ 18-20 ຊມ.

5. ການຂຸດຂຸມ ຂະໜາດຂອງຂຸມປູກ ແມ່ນ 20x20x20 ຊມ

6. ສຳລັບການປູກ ແມ່ນຕົ້ນລະດູຝົນ ການປູກດ້ວຍເຫົ້ງານີ້ ແມ່ນເປັນວິທີງ່າຍດາຍ ໂດຍມີການຈະເລີນເຕີບໂຕໄດ້ໄວ.

7. ໃສ່ຝຸ່ນແມ່ນໃສ່ປະມານ 75 ກຼາມ/ຕົ້ນ ເມື່ອເຮົາປູກໄດ້ 3 ເດືອນ ຄັ້ງທຳອິດ.

II. ຄຳຄິດຄຳເຫັນ:

- ຄວນໃຫ້ເຫົ້ງາໄມ້ສັກມີ ຂະໜາດປະມານ 15-20 ຊມ,
- ການປູກ ຄວນປູກໃນຕົ້ນລະດູຝົນ
- ຄວນປູກດ້ວຍເຫົ້ງາເພາະເປັນວິທີງ່າຍດາຍ ແລະຂົນສົ່ງສະບາຍພ້ອມດ້ວຍມີການຈະເລີນເຕີບໂຕໄວ.

# ຄຳຂອບໃຈ

ພວກຂ້າພະເຈົ້າ, ນັກສຶກສາປີສຸດທ້າຍ ຂໍສະແດງຄວາມຮູ້ບຸນຄຸນຢ່າງຍິ່ງ ຕໍ່ທ່ານຜູ້ອຳນວຍການ ພ້ອມດ້ວຍຄະນະ ແລະ ພະນັກງານ, ຄູ, ອາຈານ ຂອງໂຮງຮຽນເຕັກນິກກະສິກຳ ດົງຄຳຊ້າງ ທີ່ໄດ້ສິດສອນທາງດ້ານທິດສະດີ ແລະ ພາກປະຕິບັດຕົວຈິງ.ທີ່ໄດ້ຖ່າຍທອດຄວາມຮູ້ ຄວາມສາມາດ ແລະ ໄດ້ຊ່ວຍເຫຼືອດູ ແລະ ເບິ່ງແຍ່ງຕະຫຼອດຊ່ວງເວລາ 3 ປີເຕັມ. ທີ່ພວກຂ້າພະເຈົ້າໄດ້ສຶກສາຢູ່ໂຮງຮຽນແຫ່ງນີ້.

ອີກເທື່ອໜຶ່ງສະແດງຄວາມຮູ້ບຸນຄຸນຢ່າງຍິ່ງ ຕໍ່ທ່ານຫົວໜ້າສູນຄົ້ນຄ້ວາປ່າໄມ້ ພ້ອມດ້ວຍຄະນະ ແລະ ພະນັກງານທັງໝົດພາຍໃນສູນ. ທີ່ອຳນວຍຄວາມສະດວກຕ່າງໆ ໃນການລົງຝຶກຫັດຂອງພວກຂ້າພະເຈົ້າ ແລະ ໄດ້ຊີ້ນຳໆພາເຕັກນິກວິຊາການ.

ພິເສດ ຂໍສະແດງຄວາມຮູ້ບຸນຄຸນຢ່າງສູງ ຕໍ່ທ່ານ ບຸນໂຮມ ເທບພະວົງ ທີ່ອອກຫົວບົດ ທັງເປັນຜູ້ຊີ້ນຳ ແລະ ກວດກາ ກ່ຽວກັບການຂຽນບົດສຶກສາໂຄງການສະບັບນີ້.

ອີກເທື່ອໜຶ່ງ ຂໍສະແດງຄວາມຂອບໃຈຕໍ່ບັນດາທ່ານ ຈັນສະໝອນ ພົງອຸດົມ ທ່ານ ບົວໂຮມ ແສງຄຳຢອງ,ທ່ານ ຄອນສະຫວັນ ຫຼວງສຸວັນ, ທ່ານ ສົມພອນ ພົງດາລັດ ທີ່ໄດ້ຊ່ວຍເຫຼືອ ໃນການຂຽນບົດຄັ້ງນີ້.

ສຸດທ້າຍນີ້, ຂໍສະແດງຄວາມຮູ້ບຸນຄຸນຕໍ່ຄອບຄົວ (ພໍ່, ແມ່, ອ້າຍ, ເອື້ອຍ ແລະ ນ້ອງ) ທີ່ໄດ້ສະໜອງທຶນ ແກ່ການສຶກສາຮ່ຳຮຽນ ພ້ອມດ້ວຍການລົງຝຶກຫັດ ແລະ ການຂຽນບົດຄັ້ງນີ້ ທີ່ໄດ້ຮັບຜົນສຳເລັດເປັນຢ່າງດີ.

# ເອກະສານ ອ້າງອີງ


- ໄດ້ມາຈາກ ທິດສະດີຂອງໂຮງຮຽນ.
- ໄດ້ມາຈາກ ພາກປະຕິບັດຕົວຈິງ.
- ໄດ້ມາຈາກຄຳແນະນຳ ຂອງໜ່ວຍງານອະນະວັດວິທະຍາ.
- ໄດ້ມາຈາກ ປຶ້ມຄູ່ມືການຝຶກອົບຮົມ ຫຼັກສູດ ການຂະຫຍາຍພັນໄມ້ສັກ ໂດຍການປັກຊຳ (ມັງກອນ 2538 ໄທ.)
- ໄດ້ມາຈາກ ປຶ້ມການປູກສ້າງສວນປ່າ ອີງການອຸດສາຫະກຳ (ກົມປ່າໄມ້ ໄທ) ມັງກອນ 2536.

# ປະຫວັດນັກຮຽນ

ຊື່ ແລະ ນາມສະກຸນ: ນາງ ສຸດຕາ ແກ້ວບຸນມີ, ວັນເດືອນປີເກີດ 13/03/1979 ບ້ານຢູ່ປະຈຸບັນ: ບ້ານຖິ່ນແທ່ນ ເມືອງ ຫາດຊາຍຟອງ ແຂວງ ກຳແພງນະຄອນວຽງຈັນ. ລະດັບວັດທະນາທຳ ຈົບມ 6 ຮຽນຢູ່ ໂຮງຮຽນມັດທະຍົມຕອນປາຍ ທ່າເດື່ອ ຈົບປີ 1998

ຈາກນັ້ນໄປຮຽນທີ່ໂຮງຮຽນເຕັກນິກກະສິກຳດົງຄຳຊ້າງ ຂະແໜງກະສິກຳປ່າໄມ້. ປີ 1998-2001.

ໄດ້ເຂົ້າເປັນສະມາຊິກຊາວໜຸ່ມ ວັນທີ 25/03/1994 ແລະ ເຂົ້າເປັນສະມາຊິກແມ່ຍິງ ວັນທີ 13/06/1997 ທີ່ໂຮງຮຽນເຕັກນິກກະສິກຳດົງຄຳຊ້າງ ຂະແໜງກະສິກຳປ່າໄມ້.

ຄຳເຫັນ ແລະ ຄຳຢັ້ງຢືນ ຂອງ ຫົວໜ້າ ໜ່ວຍງານອັນນະລັດອິທະປາ

ເຫັນທານລູກເຝິກຫັດ ເພາະວ່າ ຜູ້ກ່ຽວມີຄວາມຫ້າວຫັນ ເສຍສະລະ ທາງຍາກ ເຫັນວ່າ ຜູ້ກ່ຽວ ໄດ້ຮັບ ຄະແນນ ຄຸນສົມບັດ = 8 ; ຄະແນນວິຊາການ = 8, ແລະ ຄະແນນປະຕິບັດ = 7

ວັນທີ 25/08/2001

(ລາຍເຊັນ)

ບຸນໂຮຍ ເທບພະວົງ.

ຄຳເຫັນ ແລະ ຄຳຢັ້ງຢືນ ຈາກ ທ່ານ ຫົວໜ້າ ສູນຄົ້ນຄວ້າ ປ່າໄມ້

(ກາປະທັບ: ກະຊວງກະສິກຳ ແລະ ປ່າໄມ້ — ສູນຄົ້ນຄວ້າ ປ່າໄມ້ — ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້) (ລາຍເຊັນ)

ບຸນພົມ ມູນດາ

ຄຳເຫັນ ແລະ ຄຳຢັ້ງຢືນ ຂອງ ທ່ານ ອຳນວຍ ໄຊຍະສູນ

ເຫັນດີ ທະເລີກ ດັ່ງ ຄຳ ຊ້າງ.